





# ດຳເນີນຊີວິດ ກັບພຣະຄຣິດ



ບົດຮຽນທີ 11 ສຳລັບສະບາໂຕທີ 14 ມີນາ, 2026

“ແລ້ວນອກຈາກສິ່ງທັງ
ປວງນີ້ ຈົ່ງເອົາຄວາມຮັກ
ເປັນສາຍຜູກມັດທຸກສິ່ງໄວ້
ໃຫ້ເຖິງຄວາມຄົບຖ້ວນ”

ກລຊ 3:14





ເມື່ອພວກເຮົາຖືກຈຸ່ມລົງໃນແມ່ນ້ຳຕອນຮັບບັບຕິສະມາ, ພວກເຮົາໄດ້ຕາຍຈາກຊີວິດແຫ່ງຄວາມບາບ. ຕອນທີ່ພວກເຮົາໄດ້ຂຶ້ນມາຈາກນ້ຳ ພວກເຮົາກໍ່ກາຍເປັນຜູ້ທີ່ມີຊີວິດໃໝ່

ພວກເຮົາໄດ້ລະຖິ້ມຊີວິດ ແລະ ຄວາມຄິດແບບເກົ່າໆ ຈາກນັ້ນເປັນຕົ້ນມາ, ພວກເຮົາກໍ່ດຳເນີນຊີວິດ ແລະ ຄິດແຕກຕ່າງອອກໄປ. ພວກເຮົາໄດ້ເຊົາມີທັດສະນະຄະຕິແບບຊາວໂລກ ແຕ່ວ່າມີທັດສະນະຄະຕິແບບຊາວສະຫວັນ.

ດ້ວຍເຫດຜົນບາງປະການ, ວິຖີຊີວິດແບບເກົ່າຂອງພວກເຮົາກໍ່ພະຍາຍາມກັບມາອີກ. ນັ້ນແມ່ນເຫດຜົນທີ່ອັກຄະທູດໂປໂລ ກະຕຸ້ນໃຫ້ພວກເຮົາເອົາຄວາມສົນໃຈຂອງພວກເຮົານັ້ນໄປທີ່ສະຫວັນ ແລະ ຫັນຫລັງໃຫ້ກັບສິ່ງຕ່າງໆທີ່ຢູ່ໃນໂລກ.





**ທັດສະນະຄະຕິແບບໂລກ ຫລື ແບບສະຫວັນ?**

- ຈຸດມຸ່ງໝາຍຂອງພວກເຮົາ (ກລຊ 3:1-4)
- ຕາຍຈາກສິ່ງຕ່າງໃນໂລກນີ້ (ກລຊ 3:5-6)
- ສວມໃນສິ່ງທີ່ເປັນສະຫວັນໃສ່ (ກລຊ 3:7-11)

**ລັກສະນະຂອງການມີຊີວິດໃໝ່ໃນພຣະເຢຊູ:**

- ສາຍໄຍແຫ່ງຄວາມສົມບູນແບບ (ກລຊ 3:12-14)
- ອາຫານຈາກເບື້ອງເທິງ (ກລຊ 3:15-17)

# ທັດສະນະຄະຕິ ແບບໂລກ
# ຫລື ແບບສະຫວັນ





# ຈຸດມຸ່ງໝາຍຂອງພວກເຮົາ

“ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ ບໍ່ແມ່ນສິ່ງທີ່ຢູ່ແຜ່ນດິນໂລກນີ້.” (ກລຊ 3:2)



ໂດຍເລີ່ມຈາກເຫດຜົນທີ່ວ່າພວກເຮົາໄດ້ຮັບການຍົກຂຶ້ນມາ ພ້ອມກັບພຣະຄຣິດໃນຕອນທີ່ຮັບບັບຕິສະມາ (ກລຊ. 2:12), ອຈ ໂປໂລ ຂໍໃຫ້ພວກເຮົາຕິດຕາມພຣະເຢຊູໄປຍັງສະຖານທີ່ ທີ່ພຣະອົງສະເດັດໄປຫລັງຈາກທີ່ພຣະອົງຟື້ນຄືນພຣະຊົນແລ້ວ. : ເບື້ອງເທິງ ບ່ອນທີ່ພຣະຄຣິດຊົງສະຖິດຢູ່ (ກລຊ. 3:1).

ແນ່ນອນ, ເຮົາຈະໄປເຖິງຈຸດນັ້ນໄດ້ກໍ່ຕໍ່ເມື່ອພຣະເຢຊູຊົງພາພວກເຮົາໄປ ໃນການສະເດັດກັບມາຄັ້ງທີສອງຂອງພຣະອົງ (ກລຊ. 3:4). ໃນລະຫວ່າງນີ້, ພວກເຮົາຕ້ອງຕັ້ງເປົ້າໝາຍຂອງພວກເຮົາໄວ້ໃນສະຫວັນ (ກລຊ. 3:2).



ພວກເຮົາໄດ້ “ຕາຍແລ້ວ” ແລະ ຊີວິດຂອງພວກເຮົານັ້ນ“ ແມ່ນຢູ່ໃນພຣະຄຣິດ ” (ກລຊ. 3:3). ຊີວິດທີ່ກ່າວເຖິງນີ້ແມ່ນຊີວິດທີ່ພວກເຮົາໄດ້ຮັບເມື່ອພວກເຮົາຍອມຮັບເອົາພຣະຄຣິດ.

ແຕ່ວ່າຊີວິດນັ້ນ, ເພື່ອທີ່ຈະດຳຣົງຢູ່ໄດ້, ຈຳເປັນຕ້ອງໄດ້ຮັບການບຳລຸງລ້ຽງທຸກໆມື້ (2 ກຣທ. 4:16). ໃນທຸກໆມື້ພວກເຮົາຕ້ອງສະແຫວງຫາ“ສິ່ງທີ່ຢູ່ເບື້ອງເທິງ” “ໃຫ້ພວກເຮົາຈ້ອງມອງໄປທີ່ພຣະເຢຊູ” (ຮຣ. 12:2).



# ອະທິບາຍເພີ່ມ

ການມີຈິດໃຈແບບຝ່າຍໂລກ: ໃຫ້ຄວາມສຳຄັນກັບຊັບສິນ, ເງິນທອງ, ແລະ ຄວາມສຳເລັດ, ເບິ່ງເຫັນແຕ່ສິ່ງທີ່ຢູ່ທາງໜ້າ ໃຫ້ຄວາມສຳຄັນກັບຊື່ສຽງ ແລະ ຕຳແໜ່ງ, ບັນຫາກໍ່ຄື: ສິ່ງເຫລົ່ານີ້ບໍ່ຖາວອນ ແລະ ບໍ່ສາມາດນຳພວກເຮົາໄປສູ່ສະຫວັນໄດ້.

ການມີຈິດໃຈແບບຝ່າຍສະຫວັນ: ໃຫ້ພຣະເຢຊູເປັນສູນກາງຂອງຊີວິດ, ໃຫ້ຄວາມສຳຄັນກັບຄຸນຄ່າຝ່າຍຈິດວິນຍານ, ເບິ່ງຊີວິດ ໃນມຸມມອງຂອງນິຣັນດອນ, ເລືອກເຮັດໃນສິ່ງທີ່ພຣະເຈົ້າພໍພຣະໄທ.

ຄົນທີ່ມີຈິດໃຈແບບສະຫວັນ: ໃຊ້ຊີວິດດ້ວຍຄວາມຮັກ, ໃຫ້ອະໄພຄົນອື່ນ, ຮັບໃຊ້ຜູ້ອື່ນ, ກຽມພ້ອມສຳລັບແຜ່ນດິນສະຫວັນ

ພວກເຮົາຢູ່ໃນໂລກ ແຕ່ບໍ່ຄວນເປັນຂອງໂລກ, ເປົ້າໝາຍຊີວິດຂອງພວກເຮົາຄືແຜ່ນດິນສະຫວັນ, ການຕັດສິນໃຈປະຈຳວັນ ຂອງພວກເຮົານັ້ນ ສະທ້ອນວ່າພວກເຮົາມີຄວາມຄິດແບບໃດ. ຄວາມຄິດຂອງພວກເຮົານຳໄປສູ່ການກະທຳ ແລະ ການກະທຳ ກໍ່ນຳໄປສູ່ອະນາຄົດຂອງພວກເຮົາ.

ສະນັ້ນ: ຢ່າປ່ອຍໃຫ້ຄວາມກັງວົນຂອງໂລກເຮັດໃຫ້ຫົວໃຈຂອງພວກເຮົາຫ່າງໄກຈາກພຣະເຈົ້າ. ເຖິງວ່າພວກເຮົາຈະເຮັດວຽກ, ຮຽນ, ຫລື ເບິ່ງແຍງຄອບຄົວໃນໂລກນີ້ ແຕ່ຫົວໃຈຂອງພວກເຮົາສາມາດຍຶດຕິດກັບສິ່ງທີ່ຢູ່ສະຫວັນໄດ້ສະເໝີ.
ຈົ່ງໃຊ້ຊີວິດທຸກມື້ນີ້ໃຫ້ຄືກັບເປັນການຕຽມຕົວສຳລັບແຜ່ນດິນສະຫວັນ ເພາະຊີວິດນິຣັນດອນມີຄ່າຫລາຍກວ່າສິ່ງໃດໃນໂລກນີ້

ໃນຊີວິດປະຈຳວັນຂອງພວກເຮົາ, ພວກເຮົາໄດ້ໃຊ້ເວລາຄິດເລື່ອງສະຫວັນ ຫລື ເລື່ອງຝ່າຍໂລກ ຫລາຍກວ່າກັນ?

# ຕາຍຈາກສິ່ງຕ່າງໆໃນໂລກນີ້

“ເຫດສະນັ້ນພວກເຈົ້າຕ້ອງປະຫານຕັນຫາຝ່າຍໂລກນີ້ ທີ່ດຳເນີນການຢູ່ໃນພວກເຈົ້າເຊັ່ນ: ການຜິດສິນທຳທາງເພດ, ການຊົ່ວຮ້າຍ, ຣາຄະຕັນຫາ, ຄວາມປາຖະໜາໃນທາງຊົ່ວຮ້າຍ ແລະ ຄວາມໂລບ ຊຶ່ງເປັນການຂາບໄຫວ້ຮູບເຄົາຣົບ.” (ກລຊ 3:5)

ເນື່ອງຈາກວ່າພວກເຮົາໄດ້ຟື້ນຄືນມາພ້ອມກັບພຣະຄຣິດ ແລະ ດຳເນີນຊີວິດໂດຍຄິດເຖິງສິ່ງທີ່ເປັນສະຫວັນ, ພວກເຮົາຕ້ອງກຳຈັດໃຫ້ສິ້ນຊາກສິ່ງທີ່ຂັດຂວາງພວກເຮົາບໍ່ໃຫ້ບັນລຸເປົ້າໝາຍ ນັ້ນກໍ່ຄື: ສິ່ງທີ່ເປັນຂອງຝ່າຍໂລກນີ້

ເພື່ອບໍ່ໃຫ້ຜູ້ໃດເຂົ້າໃຈຜິດໄດ້, ອຈ.ໂປໂລ ຊີ້ໃຫ້ເຫັນເຖິງເຫດຜົນຫລັກຂອງຄວາມຄິດພື້ນຖານແບບຊາວໂລກ (ເຊິ່ງລາວໄດ້ອະທິບາຍເພີ່ມເຕີມໃນພາຍຫລັງ) ນັ້ນກໍ່ຄື: “ການຜິດສິນທຳທາງເພດ, ຄວາມບໍ່ບໍຣິສຸດ, ຣາຄະຕັນຫາ, ຄວາມປາຖະໜາໃນທາງຊົ່ວຮ້າຍ ແລະ ຄວາມໂລບ” (ກລຊ. 3:5 ).

ທຳມະຊາດຂອງມະນຸດບໍ່ໄດ້ປ່ຽນແປງຫຍັງໄປຫລາຍຕັ້ງແຕ່ສະໄໝຂອງ ອຈ.ໂປໂລ, ເພາະພວກເຮົາຍັງຄົງຖືກຫວ່ານລ້ອມໄປດ້ວຍກິເຫລດຕັນຫາແບບດຽວກັນກັບສະໄໝກ່ອນ ບໍ່ວ່າຈະເປັນທາງການກະທຳ ຫລືທາງຝ່າຍຈິດວິນຍານກໍ່ຕາມ

ແລະ ເປັນຫຍັງພວກເຮົາຕ້ອງ “ກຳຈັດໃຫ້ສິ້ນຊາກ”—ສິ່ງເຫລົ່ານີ້ອອກຈາກຄວາມຄິດ ແລະ ການກະທຳຂອງພວກເຮົາທັງໝົດອອກໄປ? ເພາະວ່າສິ່ງເຫລົ່ານີ້ຈະນຳ “ພຣະພິໂລດຂອງພຣະເຈົ້າ” ມາໃຫ້ພວກເຮົາ. ເພາະສະນັ້ນມັນຈຶ່ງຂັດຕໍ່ຫລັກການດຳເນີນຊີວິດແຫ່ງສະຫວັນຂອງພວກເຮົາ (ກລຊ 3:6). ຈົ່ງກຳຈັດສິ່ງທີ່ເປັນຂອງໂລກນີ້ ກ່ອນທີ່ສິ່ງທີ່ເປັນຂອງໂລກນີ້ຈະກຳຈັດພວກເຮົາ!



# ອະທິບາຍເພີ່ມເຕີມ

ການຕາຍຕໍ່ໂລກ ບໍ່ໄດ້ໝາຍຄວາມວ່າໃຫ້ພວກເຮົາເຊົາໃຊ້ຊີວິດໃນໂລກນີ້. ແຕ່ໝາຍເຖິງ ການທີ່ຈະບໍ່ໃຫ້ຄວາມປາຖະໜາເຮັດບາບນັ້ນມາຄຸມຊີວິດຂອງພວກເຮົາ. ບໍ່ຍຶດຕິດກັບຄວາມໂລບ, ຄວາມທະເຍີທະຍານເຮັດບາບ ຫລື ຄວາມເຫັນແກ່ໂຕ, ໃຫ້ພວກເຮົາປ່ອຍວາງສິ່ງທີ່ຂັດຂວາງຕໍ່ພຣະປະສົງຂອງພຣະເຈົ້າ.

ພຣະຄຳພີບອກວ່າ: ເມື່ອພວກເຮົາຮັບເອົາພຣະຄຣິດແລ້ວ ພວກເຮົາກໍ່ມີຊີວິດໃໝ່ ແລະ ຊີວິດເກົ່າກໍ່ຖືກລະຖິ້ມແລ້ວ

ຕາຍຕໍ່ບາບ: ເຊົາເຮັດໃນສິ່ງທີ່ພຣະເຈົ້າບໍ່ພໍພຣະໄທ

ຕາຍຕໍ່ຄວາມຄິດແບບໂລກ: ບໍ່ໃຫ້ໂລກກຳນົດຄຸນຄ່າຊີວິດ ແລະ ເປົ້າໝາຍຂອງພວກເຮົາ

ມີຊີວິດໃໝ່ໃນພຣະຄຣິດ: ດຳເນີນຊີວິດດ້ວຍຄວາມຮັກ ແລະ ຄວາມບໍຣິສຸດ

ການຕາຍຕໍ່ບາບນັ້ນມັນບໍ່ງ່າຍເລີຍ, ແຕ່ພຣະເຈົ້າຈະຊົງປະທານພຣະຄຸນຂອງພຣະອົງໃຫ້ພວກເຮົາເອົາຊະນະໄດ້

ຖ້າພວກເຮົາຍອມປະຖິ້ມສິ່ງຊົ່ວຄາວ, ພວກເຮົາກໍ່ຈະໄດ້ຮັບສິ່ງທີ່ເປັນນິຣັນ

ຢ່າຢ້ານທີ່ຈະປະຖິ້ມສິ່ງເກົ່າໆ ເພາະສິ່ງໃໝ່ໆທີ່ພຣະເຈົ້າໃຫ້ນັ້ນ ດີກວ່າສະເໝີ

ການຕາຍຕໍ່ຝ່າຍໂລກ ຊ່ວຍໃຫ້ພວກເຮົາມີຄວາມສຳພັນກັບພຣະເຈົ້າດີຂຶ້ນແບບໃດ?

# ສວມສິ່ງທີ່ເປັນຂອງສະຫວັນໃສ່

**"ແລະ ສວມສະພາບມະນຸດຄົນໃໝ່ແລ້ວ ໄດ້ຖືກຊົງສ້າງຂຶ້ນໃຫ້ເປັນຄົນໃໝ່ຢູ່ສະເໝີ ໄດ້ເຮັດໃຫ້ພວກເຈົ້າເປັນເໝືອນພຣະອົງຫລາຍຂຶ້ນ ເພື່ອໃຫ້ຮູ້ຈັກພຣະອົງຢ່າງຄົບຖ້ວນບໍຣິບູນ"** (ກລຊ 3:10)



ຕາມແບບຫລັກຂອງສຸພາສິດທີ່ແທ້ຈິງ, ອຈ.ໂປໂລ ໄດ້ເພີ່ມຫລັກ 5 ປະການຂອງການຄິດແບບຊາວໂລກ ທີ່ພວກເຂົາກະທຳ ແຕ່ເປັນສິ່ງທີ່ພວກເຮົາຄວນຫລີກລ້ຽງ: "ຄວາມຄຽດຮ້າຍ, ຄວາມຂັດເຄືອງໃຈ, ການຄິດປອງຮ້າຍ, ຄຳສຽດສີ ແລະ ຄຳຊົ່ວຊ້າລາມົກ, ຢ່າໃຫ້ອອກຈາກປາກຂອງພວກເຈົ້າຈັກເທື່ອ" (ກລຊ 3:8), ແລະ ຈົບໂດຍການກະທຳໃນປະການທີ 6—ເຊິ່ງຊົ່ວຮ້າຍທີ່ສຸດ—: "ຢ່າຕົວະເຊິ່ງກັນແລະກັນ" (ກລຊ. 3:9).

ອຈ. ໂປໂລ ສັນນິຖານວ່າພວກເຮົາໄດ "ລະຖິ້ມຕົວຕົນເກົ່າຂອງພວກເຮົາພ້ອມກັບການກະທຳຕ່າງໆຕັ້ງແຕ່ຕອນທີ່ເຮົາໄດ້ຮັບບັບຕິສະມາໄປແລ້ວ" (ກລຊ. 3:9). ພວກເຮົາໄດ້ຖອດ "ເສື້ອຜ້າທີ່ເປິະເປື້ອນ" ເມື່ອພວກເຮົາຍອມໃຫ້ພຣະເຢຊູໄດ້ຊຳລະຄວາມຜິດບາບຂອງພວກເຮົາໄປ (ຊກຣຢ. 3:4 ).

ເມື່ອຖອດເສື້ອຜ້າເປິະເປື້ອນເຫລົ່ານັ້ນອອກແລ້ວ, ພວກເຮົາຈຳເປັນຕ້ອງໄດ້ສວມ "ເສື້ອຜ້າທີ່ດີ" ຖ້າວ່າພວກເຮົາສວມເສື້ອຜ້າໃໝ່ນີ້ແລ້ວ ພວກເຮົາກໍ່ຈະໄດ້ຮັບການຟື້ນຟູນຢ່າງຕໍ່ເນື່ອງ, ເຕີບໂຕໃນຄວາມບໍຣິສຸດຂຶ້ນເລື້ອຍໆ (ກລຊ 3:10).



ເມື່ອພວກເຮົາໄດ້ຮັບການຟື້ນຟູໂດຍການຊົງນຳຂອງພຣະວິນຍານບໍຣິສຸດ ແລະ ໄດ້ຮັບການຟື້ນຟູຂາກການສຶກສາພຣະວັດຈະນະແລ້ວ, ອຸປະສັກທີ່ເປັນໂຕແຍກພວກເຮົາອອກໄປຈາກພຣະຄຣິດ ກໍ່ຈະຄ່ອຍໆຈາງຫາຍໄປ (ກລຊ. 3:11).

# ອະທິບາຍເພີ່ມ

ເສື້ອຜ້າໃໝ່ໝາຍເຖິງ: ການດໍາເນີນຊີວິດດັ່ງທີ່ພຣະອົງຊົງເປັນແບບຢ່າງໃຫ້, ສວມຄວາມຮັກ, ຄວາມຖ່ອມໃຈ... ສະທ້ອນເຖິງການເປັນພຣະຍານໃຫ້ແກ່ພຣະອົງ

ເປັນຫຍັງພວກເຮົາຕ້ອງສວມເສື້ອຜ້າໃໝ່ໃສ່?

ເພາະວ່າຊີວິດເກົ່ານັ້ນບໍ່ເໝາະສົມກັບພຣະເຈົ້າ, ເສື້ອຜ້າເກົ່າປຽບເໝືອນຊີວິດເກົ່າທີ່ເຕັມໄປດ້ວຍຄວາມບາບ, ຄວາມເຫັນແກ່ໂຕ ແລະ ຄວາມບໍ່ບໍຣິສຸດ. ເມື່ອເຮົາຍອມຮັບເອົາພຣະຄຣິດແລ້ວ ເຮົາຕ້ອງປ່ຽນຈາກຊີວິດເກົ່າສູ່ຊີວິດໃໝ່

ຊີວິດຂອງຜູ້ທີ່ຕິດຕາມພຣະເຈົ້າ ບໍ່ໄດ້ຈະສິ້ນສຸດສະເພາະໃນໂລກນີ້ ແຕ່ເພື່ອຊີວິດນິຣັນດອນ ສະນັ້ນ ຜູ້ທີ່ຈະຢູ່ກັບພຣະເຈົ້າຈະຕ້ອງໄດ້ສວມເສື້ອຝ່າຍຈິດວິນຍານຢູ່ສະເໝີ.

ເສື້ອຜ້າໃໝ່ບໍ່ໄດ້ໝາຍເຖິງພຽງການປ່ຽນແປງນິໄສ ຫລື ພຶດຕິກໍາ ແຕ່ເປັນການປ່ຽນຫົວໃຈ ເພາະຖ້າຫົວໃຈ,ຈິດໃຈປ່ຽນ ຊີວິດກໍ່ປ່ຽນເຊັ່ນກັນ.

ຖ້າພວກເຮົາບໍ່ສວມເສື້ອແຫ່ງຈິດວິນຍານ, ຄວາມຊອບທໍາແລ້ວ ເຮົາຈະຖືກດຶງໄປຕາມຄ່ານິຍົມຂອງໂລກ, ສະນັ້ນ ເສື້ອຜ້າໃໝ່ຈຶ່ງຊ່ວຍປົກປ້ອງຈິດໃຈຂອງພວກເຮົາ

ຊີວິດຈະເປັນແນວໃດ? ຖ້າວ່າພວກເຮົາຍອມຮັບເອົາພຣະເຢຊູ ແຕ່ ພວກເຮົາບໍ່ຍອມສວມເສື້ອຜ້າໃໝ່?

# ລັກສະນະຂອງການມີຊີວິດໃໝ່ ໃນພຣະເຢຊູ





# ສາຍໃຍແຫ່ງຄວາມສົມບູນແບບ

“ແລ້ວນອກຈາກສິ່ງທັງປວງນີ້ ຈົ່ງເອົາຄວາມຮັກເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງຄວາມຄົບຖ້ວນ” (ກລຊ 3:14)



ພວກເຮົາແມ່ນ “ໄພ່ພົນຂອງພຣະເຈົ້າທີ່ພຣະອົງຊົງເລືອກໄວ້” (ກລຊ 3:12). ທ່ານເປໂຕບອກພວກເຮົາວ່າ ສິ່ງນີ້ເຮັດໃຫ້ພວກເຮົາໄດ້ຮັບຜົນປະໂຫຍດ ແລະ ມີຄວາມຮັບຜິດຊອບຫລາຍ (1 ປຕ 2:9). ແລ້ວ ຜູ້ທີ່ພຣະເຈົ້າຊົງຄັດສັນເອົາ ຄວນປະພຶດຕົນແບບໃດ (ກລຊ 3:12-13)?

1. ມີຄວາມເມດຕາ
2. ມີຄວາມກະຣຸນາ
3. ມີຄວາມຖ່ອມໂຕ
4. ມີໃຈອ່ອນນ້ອມ
5. ອົດທົນຕໍ່ຄວາມທຸກຍາກ
6. ອົດທົນຕໍ່ກັນແລະກັນ
7. ໃຫ້ອະໄພຕໍ່ຕົນເອງ

Agape



ສິ່ງທັງໝົດເຫລົ່ານີ້ ຈະກາຍເປັນຮູບແບບແຫ່ງຄວາມສົມບູນໄດ້ໂດຍ: ຄວາມຮັກ (ກລຊ 3:14). ແລະ ສິ່ງເຫລົ່ານີ້ແມ່ນຜົນປະໂຫຍດຂອງພວກເຮົາ:

| | |
|---|---|
| ຜົນປະໂຫຍດ | ໂດຍການປະພຶດແບບທີ່ກ່າວມາ: ພວກເຮົາກໍ່ຈະໄດ້ພຣະພອນ ທັງເປັນພຣະພອນໃຫ້ແກ່ຄົນອື່ນພ້ອມ |
| ຄວາມຮັບຜິດຊອບ | ຂໍໃຫ້ການປະພຶດຂອງພວກເຮົາເປັນທີ່ຖວາຍກຽດແດ່ພຣະເຈົ້າ, ແລະ ຂໍໃຫ້ເປັນກຳລັງໃຈໃຫ້ແກ່ຜູ້ອື່ນໃນການຕິດຕາມພຣະເຈົ້າ |

# ອາຫານຈາກເບື້ອງເທິງ

"ຈົ່ງໃຫ້ພຣະທຳຂອງພຣະຄຣິດສະຖິດຢູ່ໃນໃຈຂອງພວກເຈົ້າຢ່າງບໍຣິບູນ ຈົ່ງສັ່ງສອນແລະເຕືອນສະຕິກັນ ແລະ ກັນ ດ້ວຍປັນຍາທຸກຢ່າງ ຈົ່ງຮ້ອງເພງດ້ວຍເພງຍ້ອງຍໍສັນຣະເສີນ, ເພງນະມັດສະການ ແລະ ເພງຍ້ອງຍໍສັນຣະເສີນຝ່າຍພຣະວິນຍານ ຄືຈົ່ງຮ້ອງເພງຖວາຍແດ່ພຣະເຈົ້າດ້ວຍໃຈໂມທະນາ." (ກລຊ 3:16)

ກລຊ 3:15-17 ສະແດງໃຫ້ພວກເຮົາເຫັນເຖິງວິທີການທີ່ຈະໄດ້ຮັບການບຳລຸງລ້ຽງແບບສະຫວັນ (ແລະບາງຄັ້ງພວກເຮົາບໍ່ສາມາດເຮັດໄດ້ໂດຍລຳພັງ ແຕ່ຕ້ອງການຄວາມສາມັກຄີຂອງຄຣິດຕະຈັກເຂົ້າມາຊ່ວຍ):



ໃຫ້ສັນຕິສຸກຂອງພຣະເຈົ້າປົກຄອງພວກເຮົາ



ຍັງຄົງສືບຕໍ່ເປັນນ້ຳໜຶ່ງໃຈດຽວກັນ



ມີໃຈຊື່ນຊົມຍິນດີຕໍ່ກັນແລະກັນ



ສຶກສາພຣະວັດຈະນະຂອງພຣະເຈົ້າຮ່ວມກັນ



ແບ່ງປັນສິ່ງທີ່ເຮົາໄດ້ຮຽນຮູ້ໃຫ້ແກ່ຜູ້ອື່ນ



ຮ້ອງເພງສັນຣະເສີນ ແລະ ເພງຝ່າຍຈິດວິນຍານ



ເຮັດສິ່ງຕ່າງໆ ໃນພຣະນາມຂອງພຣະເຢຊູ (ຕາມນ້ຳພຣະໄທພຣະອົງ)

"ບົດເພງ ເປັນສິ່ງໜຶ່ງທີ່ພວກເຮົາສາມາດນຳໃຊ້ຕໍ່ສູ້ ເມື່ອພວກເຮົາຮູ້ສຶກທໍ້ແທ້ໄດ້, ເມື່ອພວກເຮົາເປີດໃຈຮັບແສງສະຫວ່າງແຫ່ງການສະຖິດຂອງພຣະຜູ້ຊ່ວຍໃຫ້ລອດ ພວກເຮົາກໍ່ຈະມີສຸຂະພາບທີ່ດີ ແລະ ໄດ້ຮັບພຣະພອນຂອງພຣະອົງ" (Ellen G. White, "The Ministry of Healing," p. 254) .



“ຈົ່ງປູກຝັງຕົນເອງ ແລະ ຄົນອ້ອມຂ້າງໃຫ້ມີຈິດໃຈທີ່ເມດຕາ, ອ່ອນໂຍນ ແລະ ເຫັນອົກເຫັນໃຈຕໍ່ຜູ້ອື່ນ ແລະ ຢ່າເອີ້ນຄຸນລັກສະນະເຫລົ່ານີ້ວ່າ ຄວາມອ່ອນແອ ເພາະຄຸນລັກສະນະເຫລົ່ານີ້ແມ່ນຄຸນລັກສະນະຂອງພຣະຄຣິດ. ຈົ່ງລະມັດລະວັງ ເຖິງອິດທິພົນຂອງການກະທຳຂອງພວກເຮົາ ແລະ ຈົ່ງໃຫ້ອິດທິພົນຂອງການກະທຳຂອງພວກເຮົານັ້ນເປັນສິ່ງທີ່ບໍລິສຸດ ແລະຫອມຫວານ ຈົນພວກເຮົາບໍ່ຮູ້ສຶກອັບອາຍທີ່ຕ້ອງໃຫ້ຜູ້ອື່ນຮຽນແບບໃນສິ່ງທີ່ພວກເຮົາກະທຳ.

ເຊັ່ນດຽວກັນກັບແມ່ນ້ຳ ທີ່ມາລວມກັນເປັນແມ່ນ້ຳ, ສິ່ງເລັກນ້ອຍກໍ່ປະກອບກັນເປັນຊີວິດ, ຊີວິດພວກເຮົາກໍ່ປຽບເໝືອນແມ່ນ້ຳທີ່ສະຫງົບບໍລິສຸດ, ໄຫລລື່ນໄປ ຫລື ວ່າພວກເຮົາອາດຈະເປັນແມ່ນ້ຳທີ່ໄຫລແບບປັ່ນປ່ວນ ເຕັມໄປດ້ວຍຄວາມສົກກະປົກ ແລະ ຂີ້ຕົມ? ສະນັ້ນ ໃນຊີວິດນີ້ ພວກເຮົາຄວນທີ່ຈະມອບຕົວຂອງພວກເຮົາເອງໃຫ້ຢູ່ພາຍໃຕ້ການຝຶກຝົນຂອງພຣະວິນຍານບໍລິສຸດ, ຜ່ານການຊຳລະໃຫ້ບໍລິສຸດໂດຍພຣະວິນຍານ, ແລະ ພວກເຮົາຈະເຕີບໂຕຂຶ້ນເລື້ອຍໆ ດັ່ງທີ່ພຣະຄຣິດຢາກໃຫ້ເປັນ.

**EGW ( That I May Know Him , July 22)**